ໂຄງການທະສິທຳ ເພື່ອໂພຊະນາການ
ຂັ້ນຕອນການລ້ຽງປາປະສົມປະສານ ຮ່ວມກັບການລ້ຽງໝູ

18

1 ການເລືອກສະຖານທີ່

- ສະຖານທີ່ລ້ຽງປາປະສົມປະສານ ຮ່ວມກັບໝູ ຄວນລ້ຽງຢູ່ໃກ້ບ້ານ ຫຼື ເຮືອນ ເພາະວ່າຈະມີກິ່ນເໝັນຈາກການລ້ຽງສັດ.
- ສະຖານທີ່ຕ້ອງມີແຫຼ່ງນ້ຳພຽງພໍໃນການລ້ຽງປາ ແລະ ໝູ ເຊັ່ນ: ໃກ້ແມ່ນ້ຳ, ຫ້ວຍ ຫຼື ຊຶນລະປະທານ.
- ການລ້ຽງປາ ຮ່ວມກັບການລ້ຽງໝູ ແມ່ນເພື່ອຫລຸດຕົ້ນທຶນອາຫານໃນການ ລ້ຽງປາ ເພາະຝຸ່ນຄອກ ຈາກການລ້ຽງໝູ ຈະຊ່ອຍໃນການສ້າງອາຫານ ທຳມະຊາດ ໃນໜອງປາ ແລະ ເສດອາຫານບາງຢ່າງ ປາສາມາດກິນໂດຍກົງໄດ້.

2 ການສ້າງຄອກໝູ

2.1 ການສ້າງຄອກໝູຢູ່ເທິງໜອງປາ

- ການສ້າງຄອກໝູຢູ່ເທິງໜອງປາ ຈະເຮັດໃຫ້ປາໃຊ້ປະໂຫຍດຈາກຂີ້ໝູ ແລະ ເສດອາຫານຈາກສັດ ເພື່ອເປັນອາຫານປາ ຫຼື ເປັນຝຸ່ນໃຫ້ແກ່ໜອງ.
- ລັກສະນະ ການສ້າງຄອກ ຢູ່ເທິງໜອງປາ ຈະມີຂໍ້ເສຍ ຄື: ຂີ້ສັດຈະລົງສູ່ໜອງປາໂດຍກົງ ຈະເຮັດໃຫ້ນ້ຳເນົ່າໄດ້ງ່າຍ.

2.2 ການກະກຽມໜອງເກົ່າ

- ການສ້າງຄອກຢູ່ຂ້າງໜອງປາ, ປາບໍ່ໄດ້ໃຊ້ປະໂຫຍດຈາກຂີ້ສັດ ແລະ ເສດອາຫານໂດຍກົງ, ຈະເອົາເປັນຝຸ່ນຄອກໃສ່ໃນໜອງປາ ເພື່ອໃຫ້ເກີດອາຫານທຳມະຊາດ.
- ສາມາດຄວບຄຸມຂີ້ສັດ ຫຼື ຂອງເສຍລົງສູ່ໜອງປາໄດ້ ແລະ ບໍ່ເຮັດໃຫ້ນ້ຳເນົ່າເສຍໄດ້ງ່າຍ.

3 ການກະກຽມໜອງ

- ດູດນ້ຳໜອງໃຫ້ແຫ້ງ ແລະ ຈັບປາທີ່ລ້ຽງ ຫຼື ປາທຳມະຊາດອອກໃຫ້ໝົດ ເພື່ອປ້ອງກັນບໍ່ໃຫ້ມີສັດຕູປາໃນໜອງ.
- ໃສ່ປູນຂາວ ເພື່ອປັບສະພາບຄວາມເປັນກົດ-ເປັນດ່າງຂອງນ້ຳ ແລະ ຂ້າເຊື້ອພະຍາດ, ການຫວ່ານປູນຂາວ ຕ້ອງໃຫ້ຖົ່ວໜອງໃນປະລິມານ 1 ກິໂລກຼາມ/25ມ^2, ຫຼັງຈາກນັ້ນໃຫ້ຕາກແດດຢ່າງໜ້ອຍ 2 ອາທິດຂຶ້ນໄປ.
- ໃສ່ຝຸ່ນຄອກ (ຂີ້ສັດແຫ້ງ) ໃຫ້ທົ່ວພື້ນໜອງ ເພື່ອໃຫ້ເກີດອາຫານທຳມະຊາດຈຳພວກໄຮນ້ຳຊະນິດຕ່າງໆ, ໃນອັດຕາສ່ວນ 1.5-3 ກິໂລກຼາມ/25ມ^2. ຈາກນັ້ນ ຄວນເຮັດບ່ອນໃສ່ຝຸ່ນຄອກ ໃນແຈໜອງ ເພື່ອສະດວກໃນການອະນາໄມໜອງ.
- ປ່ອຍນ້ຳເຂົ້າໃສ່ໜອງໃຫ້ໄດ້ລະດັບຄວາມເລິກ 1-1.5 ແມັດ, ປະໄວ້ປະມານ 10-15 ມື້.

4 ການຄັດເລືອກແມ່ພັນໝູ ແລະ ແມ່ພັນປາ

4.1 ແມ່ພັນໝູ ແລະ ອັດຕາການປ່ອຍໝູລ້ຽງ

- ແມ່ພັນໝູທີ່ນຳມາລ້ຽງເຊັ່ນ: ໝູລາດ, ໝູແດງ ແລະ ໝູພັນເປັນຕົ້ນ.
- ແມ່ພັນໝູຈະນຳມາລ້ຽງຄວນມີລັກສະນະສົມບູນ, ແຂງແຮງດີ, ການຈະເລີນເຕີບໃຫຍ່ໄວ ແລະ ຂະຫຍາຍພັນໃຫ້ລູກຫຼາຍ.
- ການລ້ຽງໝູແມ່ນ 2 ໂຕ/ເນື້ອທີ່ໜອງປາ 200ມ^2.

4.2 ແມ່ພັນປາ ແລະ ອັດຕາການປ່ອຍປາລ້ຽງ

- ແມ່ພັນປາທີ່ນຳມາລ້ຽງເຊັ່ນ: ປານິນ, ປາໄນ, ປາປາກ, ປາມະລິການ, ປາຫົວໃຫຍ່ ແລະ ປາເກັດແລບເປັນຕົ້ນ.
- ການປ່ອຍປາລ້ຽງຮ່ວມກັບການລ້ຽງໝູໃນໜອງຂະໜາດ 200ມ^2 , ປ່ອຍປາໃນອັດຕາ 3-5 ໂຕ/ມ^2 ແລະ ການປ່ອຍປາລ້ຽງແມ່ນປ່ອຍໃນ 3 ແບບຕາມຕາຕະລາງລຸ່ມນີ້.

ຮູບແບບ ການປ່ອຍປາ	ຊະນິດແມ່ພັນປາ (ໂຕ)	ຈຳນວນປາ (ໂຕ)
1. ປ່ອຍປາຊະນິດດຽວ	1. ປ່ອຍປາຊະນິດດຽວ	1,000
2. ປ່ອຍປາຫຼາຍຊະນິດ ແບບທີ່1	ປານິນ ປາໄນ ປາປາກ ປາຫົວໃຫຍ່ ຫຼື ເກັດແລບ ປາມະລິການ	600 100 150 50 100
3. ປ່ອຍປາຫຼາຍຊະນິດ ແບບທີ່2	ປາຄັດລາ ປາໂຮຮູ ປາມະຣິການ	400 300 300

5 ປະເພດອາຫານ, ວິທີການເຮັດອາຫານ ແລະ ວິທີໃຫ້ ອາຫານ

5.1 ປະເພດອາຫານ

ປະເພດຂອງອາຫານປາ ທີ່ມີການລ້ຽງລວມກັນຫຼາຍຊະນິດ ຈະມີປາຊະນິດກິນພືດ, ກິນທັງພືດ ແລະ ຊີ້ນຢູ່ນຳກັນ, ປະເພດອາຫານຈະມີອາຫານສຳເລັດຮູບ ແລະ ອາຫານສົດ, ອາຫານສົດທີ່ສາມາດຫາໄດ້ຕາມທ້ອງຖິ່ນຈະມີ 3 ກຸ່ມເຊັ່ນ:

- ອາຫານກຸ່ມພືດຜັກ ເຊັ່ນ: ຜັກບົ້ງ, ໃບມັນຕົ້ນ, ໃບມັນດ້ວງ ແລະ ໃບຫຍ້າ.
- ອາຫານກຸ່ມແປ້ງ ເຊັ່ນ: ຮຳ, ເຂົ້າປາຍ, ເຂົ້າສານ ແລະ ຫົວມັນຕົ້ນ.
- ອາຫານກຸ່ມຊີ້ນ ເຊັ່ນ: ແມງໄມ້ຊະນິດຕ່າງໆ, ປວກ, ຫອຍ, ກະປູ ແລະ ຂີ້ກະເດືອນ.

5.2 ວິທີການເຮັດອາຫານ

ການເຮັດອາຫານປາໂດຍວິທີງ່າຍໆ ຊຶ່ງມີຫຼາຍວິທີດັ່ງຕໍ່ໄປນີ້:

- ການໃຫ້ອາຫານໂດຍກົງຖ້າເປັນອາຫານທີ່ລະອຽດ ຫຼື ອ່ອນພໍທີ່ປາສາມາດກັດກິນໄດ້ ຫຼື ບົດລະອຽດ ກ່ອນຈະໃຫ້ປາກິນ.
- ການປະສົມອາຫານ ສາມາດນຳອາຫານທີ່ຊອຍລະອຽດແລ້ວ ມາປະສົມເຂົ້າກັນໂດຍຕື່ມນ້ຳພໍປັ້ນເປັນກ້ອນໄດ້ ຈຶ່ງເອົາໄປໃຫ້ປາກິນ ຖ້າຕ້ອງການໃຫ້ປາກິນງ່າຍ, ຍ່ອຍໄດ້ດີ ແລະ ມີລົດຊາດດີ ຄວນຕົ້ມອາຫານ ກຸ່ມແປ້ງກ່ອນ ເມື່ອອາຫານເຢັນລົງ ຈຶ່ງປະສົມດ້ວຍອາຫານກຸ່ມຊີ້ນ ແລະ ກຸ່ມພືດຜັກ ຈຶ່ງປັ້ນເປັນກ້ອນ ກ່ອນຈະເອົາໄປໃຫ້ປາກິນ.
- ການປະສົມອາຫານ ສາມາດປະສົມອາຫານທັງ 3 ກຸ່ມ ເຂົ້າກັນໂດຍໃຊ້ກຸ່ມລະ 1 ກິໂລ.

5.3 ວິທີການໃຫ້ອາຫານ

- ຄວນເຮັດບ່ອນໃຫ້ອາຫານປາ ຊຶ່ງຈົມຢູ່ພື້ນນ້ຳພໍປະມານ ແລະ ສາມາດເບິ່ງເຫັນໄດ້ ແລ້ວຈຶ່ງເອົາອາຫານ ທີ່ປັ້ນເປັນກ້ອນໃຫ້ປາກິນ ແລະ ໃຫ້ທຸກໆວັນ, ອັດຕາການໃຫ້ແມ່ນປະມານ 2-3 ເປີເຊັນ ຂອງນ້ຳໜັກປາຕໍ່ວັນ, ເວລາແມ່ນໃຫ້ໃນຕອນເຊົ້າ ແລະ ຕອນແລງ.
- ເມື່ອໃຫ້ອາຫານຈຳນວນໜຶ່ງ ໃນບ່ອນໃສ່ອາຫານແລ້ວ ຕ້ອງສັງເກດການກິນອາຫານຂອງປາ ໂດຍສັງເກດ ຫຼັງຈາກໃຫ້ອາຫານໄປແລ້ວ 30 ນາທີ ຖ້າອາຫານໝົດກໍ່ໃຫ້ເພີ່ມອາຫານຂຶ້ນອີກ, ແຕ່ຖ້າອາຫານເຫຼືອຢູ່ ຕ້ອງໃຫ້ຫຼຸດລົງໃນວັນຕໍ່ໄປ.

ບ້ານໂພນໄຊ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ສ ປປ ລາວ.
Phonexay village, Saysettha district, Vientiane Capital, Lao PDR.
ໂທ: +856 20 416 556
Fax: +856 20 416 556
E-mail : ssfsn.project@gmail.com
ເວັບໄຊ້: www.afn.gov.la